ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມວິຊາການກ່ຽວກັບລະບົບການຊໍາລະ ໃນເງື່ອນໄຂ ແລະ ສິ່ງທ້າທາຍຂອງພະຍາດໂຄວິດ-19





ກົມຄຸ້ມຄອງລະບົບຊໍາລະສະສາງ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມວິຊາການ ຫົວຂໍ້ **"ວຽກງານລະບົບການຊໍາລະ ໃນເງື່ອນໄຂ ແລະ ສິ່ງທ້າທາຍຂອງພະຍາດ Covid-19 ແລະ ກົນໄກການຄົ້ນຄວ້າອອກອະນຸຍາດ"** ຂຶ້ນໃນວັນທີ 04 ມີນາ 2021, ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ຂອງ ທຫລ ພາຍໃຕ້ການເປັນປະທານຂອງທ່ານ ສຸລິສັກ ທໍານຸວົງ, ຫົວໜ້າກົມດັ່ງກ່າວ ແລະ ມີບັນດາຄະນະກົມ, ຄະນະອໍານວຍການທະນາຄານທຸລະກິດ ແລະ ນິຕິບຸກຄົນທີ່ໃຫ້ບໍລິການຊໍາລະ ແລະພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ການສໍາມະນາຄັ້ງນີ້ເປັນເວທີໃຫ້ບັນດາພະນັກງານໂດຍສະເພາະເພື່ອຂໍ່ານັບຮັບຕ້ອນວັນແມ່ຍິງສາກົນຄົບຮອບ 111 ປີ ແລະ ທັງເຮັດໃຫ້ເອື້ອຍນ້ອງຍິງທີ່ລົງເລິກເຮັດວຽກຕົວຈິງກ່ຽວກັບວຽກງານການຄົ້ນຄວ້າອອກອະນຸຍາດກ່ຽວກັບລະບົບການຊໍາລະໃນເງື່ອນໄຂ ແລະ ສິ່ງທ້າທາຍຂອງການແຜ່ລະບາດຂອງພະຍາດ Covid-19 ໄດ້ສະແດງຄວາມຮູ້ຄວາມສາມາດ ທີ່ຍາມໃດແມ່ຍິງລາວເຮົາ ກໍ່ມີຄວາມເທົ່າທຽມ ແລະ ສະເໝີພາບກັບເພດຊາຍ. ນອກຈາກນີ້, ເອື້ອຍນ້ອງຍິງກໍ່ຖືວ່າເປັນກໍາລັງແຮງຕົ້ນຕໍທີ່ເຮັດວຽກຄຽງບ່າຄຽງໄຫຼ່ກັບເພດຊາຍ ໃນການຄົ້ນຄວ້າສ້າງ ແລະ ພັດທະນາການຄຸ້ມຄອງລະບົບການຊໍາລະ ທັງສາມດ້ານຄື: ❶ດ້ານນິຕິກໍາ ແລະ ລະບຽບການ, ❷ການຄຸ້ມຄອງ,ຕິດຕາມ-ກວດກາ ແລະ ❸ການພັດທະນາລະບົບການຊໍາລະ ນັບແຕ່ມື້ສ້າງຕັ້ງກົມເປັນຕົ້ນມາ.

ພ້ອມດຽວກັນນີ້, ຍັງເປັນການສ້າງຄວາມເຂົ້າໃຈກ່ຽວກັບວຽກງານຄົ້ນຄວ້າອອກອະນຸຍາດລະບົບການຊໍາລະໃຫ້ແກ່ພະນັກງານທີ່ກົມຄຸ້ມຄອງລະບົບຊໍາລະສະສາງ ຫາກໍ່ໄດ້ຮັບການບັນຈຸໃນໄລຍະປີ 2020 ແລະ ພາກສ່ວນກ່ຽວຂ້ອງໄດ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ວຽກງານດັ່ງກ່າວ ເນື່ອງຈາກຜ່ານການຈັດຕັ້ງປະຕິບັດຕົວຈິງໃນໄລຍະຜ່ານມາ ເຫັນວ່າ: ຫຼາຍພາກສ່ວນ ໂດຍສະເພາະແມ່ນ ຜູ້ໃຫ້ບໍລິການ ຫຼື ຜູ້ທີ່ມີຈຸດປະສົງໃຫ້ບໍລິການ ການຊໍາລະ ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງຕໍ່ຂະບວນການ, ກົນໄກ, ການກະກຽມເອກະສານ ແລະ ການຄົ້ນຄວ້າອອກອະນຸຍາດກ່ຽວກັບລະບົບການຊໍາລະ.




# ຂ່າວ: ກົມຄຸ້ມຄອງລະບົບຊຳລະສະສາງ, ທຫລ.

# ພາບ: ນ. ວັນປະເສີດ ສີມບູນຂັນ.

ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ